Media Release

Cambodia • Lao PDR • Thailand • Viet Nam
For sustainable development

ເພື່ອການເຜີຍແຜ່

# ຄມສ ມອບລາງວັນ ການແຂ່ງຂັນຂຽນບົດຄວາມ ເພື່ອສະເຫຼີມສະຫຼອງຮ່ວມກັນ ຄຸ່ນຄ່າຂອງແມ່ນ້ຳຂອງ, ສົ່ງເສີມການວາງແຜນ ແລະ ການຄຸ້ມຄອງແມ່ນ້ຳຂອງແບບມີສ່ວນຮ່ວມ

**ນະຄອນຫຼວງວຽງຈັນ, ສປປ ລາວ, ວັນທີ 24 ກໍລະກົດ 2018** – ໃນມື້ນີ້, ຄະນະກຳມາທິການແມ່ນ້ຳຂອງສາກົນ (ຄມສ) ໄດ້ມອບລາງວັນໃຫ້ກັບ ຜູ້ຊະນະ ການແຂ່ງຂັນຂຽນບົດຄວາມ ເພື່ອສະເຫຼີມສະຫຼອງຮ່ວມກັນ ຄຸນຄ່າ ແລະ ຊັບພະຍາກອນ ຂອງ ແມ່ນ້ຳຂອງ ແລະ ຍົກສູງຄວາມຕື່ນຕົວ ຕໍ່ຄວາມສຳຄັນ ຂອງ ການວາງແຜນ ແລະ ການຄຸ້ມຄອງອ່າງແມ່ນ້ຳນີ້ແບບປະສານສົມທົບກັນ.

ຜູ້ຊະນະການແຂ່ງຂັນແມ່ນມາຈາກ ຫ້າປະເທດໃນອ່າງແມ່ນ້ຳຂອງ ທີ່ໄດ້ຖືກຄັດເລືອກຈາກ ຜູ້ຂຽນທັງໝົດ 300 ຄົນ ທີ່ເຂົ້າຮ່ວມ, ຜູ້ທີ່ໄດ້ຂຽນບົດຄວາມໃນຫົວຂໍ້ "ແມ່ນ້ຳຂອງມີຄວາມໝາຍແນວໃດກັບທ່ານ?". ຜູ້ເຂົ້າຮ່ວມແຂ່ງຂັນຈາກ ຣາຊະອານາຈັກກຳປູເຈຍ ໄດ້ຮັບຄັດເລືອກເປັນຜູ້ຊະນະອັນດັບທີ່ໜຶ່ງ ແລະ ທີ ສີ່ ໂດຍໄດ້ຮັບລາງວັນ 300 ແລະ 50 ໂດລາສະຫະລັດ ຕາລຳດັບ. ຜູ້ເຂົ້າແຂ່ງຂັນຈາກ ຣາຊະອານາຈັກໄທ, ສສ ຫວຽດນາມ ແລະ ສປປ ລາວ ໄດ້ຮັບຄັດເລືອກເປັນທີ ສອງ, ສາມ ແລະ ຫ້າ ຕາມລຳດັບໂດຍ ໄດ້ຮັບລາງວັນຈຳນວນ 50 ໂດລາສະຫະລັດ. ສ່ວນ ອີກເຈັດທ່ານ ແມ່ນໄດ້ຮັບລາງວັນຜູ້ເຂົ້າຮອບສຸດທ້າຍ ແລະ ໃບຍັ້ງຢືນຊົມເຊີຍ.

ໃນພິທີມອບ- ຮັບລາງວັນທີ່ ກອງເລຂາ ຄມສ ທີ່ ນະຄອນຫຼວງວຽງຈັນ, ຜູ້ຊະນະການແຂ່ງຂັນເຫຼົ່ານີ້ ໄດ້ສະແດງໃຫ້ເຫັນເຖິງຄຸນຄ່າ ຂອງ ແມ່ນ້ຳຂອງ ແລະ ບົດບາດ ທີ່ສຳຄັນຂອງ ຄມສ.

"ແມ່ນ້ຳຂອງ ແມ່ນ ແຫຼ່ງຊີວິດ, ເປັນຄືມົນສະກົດ. ແມ່ນ້ຳສາຍນີ້ລໍ່ລ້ຽງຄົນຫລາຍລ້ານຄົນ ແລະ ສາມາດຄົງຕົວໄດ້ດ້ວຍ ບົດບາດ ຂອງ ອົງການຈັດຕັ້ງແບບ ຄມສ" ກ່າວ ທ່ານ ອຸຍ ລີມ ອັງ, ນັກສຶກສາ ຈາກ ສະຖາບັນການຕ່າງປະເທດ ຣາຊະອານາຈັກກຳປູເຈຍ, ຜູ້ຊະນະເລີດ ອັນດັບໜຶ່ງ ຂອງ ການແຂ່ງຂັນ.

"ແມ່ນ້ຳຂອງ ຂັບເຄື່ອນ ເສດຖະກິດພາກພື້ນ ແລະ ລໍ່ລ້ຽງຊີວິດໃນຂົງເຂດນີ້. ແມ່ນ້ຳດັ່ງກ່າວປຽບດັ່ງເສັ້ນເລືອດ ທີ່ລໍ່ລ້ຽງ ອາໄວຍະຍະແຕ່ລະສວນຂອງຮ່າງກາຍ. ຂ້າພະເຈົ້າບໍ່ຢາກຈິນຕະນາການວ່າ ອັນໃດຈະເກີດຂຶ້ນ ຖ້າບໍ່ມີຄະນະກຳມາທິການ ແມ່ນ້ຳຂອງສາກົນ" ຜູ້ຊະນະເລີດອັນດັບທີຫ້າ ທ່ານ ນາງ ສີລິພອນ ດາລາວົງ ຈາກ ສປປ ລາວ ໄດ້ກ່າວ ໃນພິທີມອບ-ຮັບລາງວັນ, ທີ່ມີຄົນເຂົ້າຮ່ວມຈຳນວນ 80 ທ່ານ ຮວມທັງ ນັກສຶກສາ ແລະ ຄູອາຈານ ຈາກມະຫາວິທະຍາໄລແຫ່ງຊາດລາວ ແລະ ພະນັກງານກອງເລຂາ ຄມສ.

ໃນພິທີມອບ-ຮັລລາງວັນ, ທ່ານ ຟາມ ຕວນ ພານ ຫົວຫນ້າກອງເລຂາ ຄມສ ໄດ້ກ່າວ ວ່າ ທ່ານ ປະທັບໃຈ ຕໍ່ຄຸນຄ່າ ທີ່ຜູ້ເຂົ້າຮ່ວມແຂ່ງຂັນ ມີຕໍ່ ແມ່ນ້ຳຂອງ ແລະ ສາຍໃຍອັນແຮງກ້າ ທີ່ຄົນມີຕໍ່ແມ່ນ້ຳຂອງ.

"ຂ້າພະເຈົ້າ ໄດ້ເຫັນບົດຂຽນ ຫຼາຍຮ້ອຍເລື່ອງ ກ່ຽວກັບ ຄວາມສຳຄັນຂອງແມ່ນ້ຳຂອງ ແລະ ສາຍພົວພັນທີ່ຄົນມີຕໍ່ແມ່ນ້ຳຂອງ. ສິ່ງດັ່ງກ່າວ ໄດ້ຂັບເຄື່ອນ ພວກເຮົາ ແລະ ເຕືອນພວກເຮົາວ່າ ເປັນຫຍັງ ການຮ່ວມມືຂອງພວກເຮົາຈຶ່ງ

ສໍາຄັນຕໍ່ການປົກປັກຮັກສາ ແລະ ພັດທະນາ ແມ່ນ້ຳ ຢ່າງມີຄວາມຮັບຜິດຊອບ ແລະ, ສິ່ງສໍາຄັນທີ່ສຸດ ແມ່ນ ຄວາມສໍາຄັນຂອງ ຄມສ" ກ່າວໂດຍ ທ່ານ ຟາມ ຫົວໜ້າກອງເລຂາ ຄມສ.

ຄູ່ຮ່ວມພັດທະນາ ຂອງ ຄມສ ທີ່ໄດ້ເຂົ້າຮ່ວມພິທີດັ່ງກ່າວ ກໍໄດ້ມີທັດສະນະ ຮ່ວມກັບ ທ່ານ ຫົວໜ້າກອງເລຂາ ຄມສ. ທ່ານ ອຸ່ນເຮືອນ ໄຊຍະສິດ ຈາກສະຖານທູດ ອິດສະຕາລີ ປະຈໍາ ນະຄອນຫຼວງວຽງຈັນ ໄດ້ສະແດງຄວາມຍິນດີຊົມເຊີຍຕໍ່ທັດສະນະ ຂອງຜູ້ເຂົ້າແຂ່ງຂັນ ກ່ຽວກັບຄວາມສໍາຄັນຂອງແມ່ນ້ຳ ໃນຄັ້ງນີ້.

"ບັນດາບົດຄວາມໃນການແຂ່ງຂັນຄັ້ງນີ້ ໄດ້ເຮັດໃຫ້ວຽກງານຂອງພວກເຮົາມີຊີວິດຊີວາຂຶ້ນມາ. ການຮັກສາຄຸນຄ່ານີ້ ແລະ ສູ້ຊົນສ້າງຄວາມດຸ່ນດ່ຽງ ລະຫວ່າງການຂະຫຍາຍຕົວທາງດ້ານເສດຖະກິດ ແລະ ຄວາມຍືນຍົງດ້ານສິ່ງແວດລ້ອມ ບໍ່ແມ່ນເລື່ອງງ່າຍ. ຄມສ ຄວນໄດ້ຮັບການສະໜັບສະໜູນຢ່າງສູງເທົ່າທີ່ເປັນໄປໄດ້."

ການແຂ່ງຂັນຂຽນບົດຄວາມ ທີ່ເລີ່ມຕົ້ນແຕ່ຕົ້ນປີນີ້ ໄດ້ເປີດກວ້າງໃຫ້ກັບບັນດາຜູ້ເຂົ້າຮ່ວມຈາກປະເທດ ໃນ ຣາຊະອານາຈັກກໍາປູເຈຍ, ສປປ ລາວ, ຣາຊະອານາຈັກໄທ ແລະ ສສ ຫວຽດນາມ. ການແຂ່ງຂັນດັ່ງກ່າວແມ່ນແນໃສ່ສະເຫຼີມສະຫຼອງ ວັນ ສັນຍາແມ່ນ້ຳຂອງ ທີ່ໄດ້ເຊັນຮ່ວມກັນໃນປີ 1995 ແລະ ສ້າງຈິດສໍານຶກ ຕໍ່ຄວາມສໍາຄັນ ໃນການວາງແຜນ ແລະ ຄຸ້ມຄອງອ່າງແມ່ນ້ຳຂອງແບບປະສານສົມທົບ. ຜູ້ເຂົ້າແຂ່ງຂັນ ຕ້ອງ ສົ່ງບົດຄວາມ ບໍ່ເກີນ 60 ຄໍາ ໃນພາສາອັງກິດ ຫຼື ພາສາທ້ອງຖິ່ນ.

ຜູ້ທີ່ຖືກຄັດເລືອກ 12 ທ່ານ ໄດ້ສະແດງຜົນງານ ໃນກອງປະຊຸມສາກົນ ແລະ ວັນແມ່ນ້ຳຂອງ ແລະ ນໍາສະເໜີຕໍ່ຜູ້ນໍາ ຂອງ ປະເທດແມ່ນ້ຳຂອງ ໃນກອງປະຊຸມສຸດຍອດຄັ້ງທີ 3 ຂອງ ຄມສ. ນອກຈາກນັ້ນ ບົດຄວາມເຫຼົ່ານີ້ຍັງຈະໄດ້ນໍາໄປຈັດພິມ ໃນບັນດາຜະລິດຕະພັນສື່ສານອື່ນໆ ຂອງ ຄມສ.

ກິດຈະກໍາດັ່ງກ່າວ ແມ່ນ ການແຂ່ງຂັນ ການຂຽນບົດຄວາມເທື່ອທໍາອິດທີ່ ຄມສ ໄດ້ຈັດຂຶ້ນ ແລະ ສືບເນື່ອງມາຈາກການແຂ່ງຂັນ ຮູບຖ່າຍ ຂອງ ຄມສ ທີ່ໄດ້ຈັດຂຶ້ນ ໃນທ້າຍປີນີ້ ໂດຍມີ 165 ຜົນງານ ຈາກ ນັກຖ່າຍຮູບ ມືສະໝັກຫຼິ້ນໄດ້ເຂົ້າຮ່ວມ.

**ຫມາຍເຫດ:**
ຄມສ ແມ່ນ ອົງການຈັດຕັ້ງ ລະຫວ່າງລັດຖະບານ ເພື່ອການປຶກສາຫາລື ແລະ ການຮ່ວມມື ໃນອ່າງແມ່ນ້ຳຂອງ ຕອນລຸ່ມ, ສ້າງຕັ້ງຂຶ້ນໃນປີ 1995 ອີງຕາມສັນຍາແມ່ນ້ຳຂອງ ລະຫວ່າງ ຣາຊະອານາຈັກກໍາປູເຈຍ, ສປປ ລາວ, ຣາຊະອານາຈັກໄທ, ແລະ ສສ ຫວຽດນາມ. ອົງການດັ່ງກ່າວເປັນກົນໄກລະດັບພາກພື້ນ ເພື່ອ ການຮ່ວມມື ກ່ຽວກັບນ້ຳ ແລະ ທັງເປັນ ສູນກາງຄວາມຮູ້ການຄຸ້ມຄອງຊັບພະຍາກອນນ້ຳເພື່ອການພັດທະນາ ທີ່ຍືນຍົງ ຂອງ ພາກພື້ນ.

**- ຈົບ -**

**ຂໍ້ມູນເພີ່ມເຕີມ, ກະລຸນາຕິດຕໍ່ :**
ທ່ານ ໂສພຽກ ແມສ
ເຈົ້າໜ້າທີ່ ສື່ສານ
ກອງເລຂາ ຄະນະກໍາມາທິການແມ່ນ້ຳຂອງສາກົນ
ອີເມວ: sopheak@mrcmekong.org
ໂທລະສັບ: +856-21-263263, ext. 4070
ໂທລະສັບມືຖື : +856-20-77779168